ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
<[illegible]>

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 2526 /ຍທຂ.
ນະຄອນຫຼວງວຽງຈັນ, ວັນທີ 16 - 2 - 11

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ
# ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ

- ອີງຕາມກົດໝາຍວ່າດ້ວຍ ການບິນພົນລະເຮືອນ, ສະບັບເລກທີ 01/ສພຊ, ລົງວັນທີ 19/05/2005.
- ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 09/11/2005.
- ອີງຕາມດຳລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 373/ນຍ, ລົງວັນທີ 22/10/2007.

ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ເພື່ອໃຫ້ເຄື່ອນໄຫວວຽກງານຢ່າງມີຄຸນນະພາບ, ຮັບປະກັນການບໍລິການທີ່ສະດວກ, ວ່ອງໄວ, ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ວ່າດ້ວຍການບິນພົນລະເຮືອນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 2: ຄວາມໝາຍຂອງຄຳສັບ.**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໝາຍເຖິງວິສາຫະກິດທີ່ສ້າງຕັ້ງ ແລະ ຂຶ້ນທະບຽນເພື່ອດຳເນີນທຸລະກິດ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຊຶ່ງດຳເນີນກິດຈະການ ໃນນາມເປັນຕົວແທນ ຂອງບັນດາສາຍການບິນ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມສັນຍາທີ່ໄດ້ເຮັດນຳກັນ.
2. ການອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໝາຍເຖິງ ການອະນຸຍາດ ທາງດ້ານວິຊາການທີ່ ກົມການບິນພົນລະເຮືອນ ອອກໃຫ້ແກ່ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໄດ້ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້.
3. ສາຂາ ໝາຍເຖິງວິສາຫະກິດທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໃນນາມເປັນສາຂາຂອງວິສາຫະກິດໃດໜຶ່ງ ໂດຍໄດ້ຂຶ້ນທະບຽນວິສາຫະກິດ ໃນນາມເປັນສາຂາຢ່າງຖືກຕ້ອງ ຕາມກົດໝາຍ ຂອງ ສປປ ລາວ ເພື່ອດຳເນີນທຸລະກິດການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຊຶ່ງມີຄວາມພ້ອມທາງດ້ານບຸກຄະລາກອນ ແລະ ອຸປະກອນການຮັບໃຊ້ຕ່າງຫາກ, ທີ່ແຍກອອກຈາກສຳນັກງານໃຫຍ່ ແລະ ສາຂາອື່ນໆ ຂອງວິສາຫະກິດ ດັ່ງກ່າວ.

## ໝວດທີ 2
## ການຂໍອະນຸຍາດ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ

**ມາດຕາ 3: ເງື່ອນໄຂຂອງຜູ້ຂໍອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.**

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ມີຈຸດປະສົງ ຂໍອະນຸຍາດດັ່ງກ່າວ ຕ້ອງມີເງື່ອນໄຂຕົ້ນຕໍດັ່ງນີ້:

1. ໄດ້ຂຶ້ນທະບຽນວິສາຫະກິດເພື່ອດຳເນີນທຸລະກິດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຢ່າງຖືກຕ້ອງ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ;
2. ໃນກໍລະນີ ວິສາຫະກິດດັ່ງກ່າວສ້າງຕັ້ງຂຶ້ນໃນນາມສາຂາ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດເປັນສາຂາ ເພື່ອດຳເນີນທຸລະກິດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຢ່າງຖືກຕ້ອງ ນຳຂະແໜງອຸດສາຫະກຳ ແລະ ການຄ້າ;
3. ໄດ້ເຮັດສັນຍາເປັນຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ກັບບັນດາສາຍການບິນທີ່ກ່ຽວຂ້ອງ;

4. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການທີ່ກ່ຽວຂ້ອງ ຊຶ່ງມີໃບປະກາດສະນີຍະບັດ ຫລື ໃບຢັ້ງຢືນຄຸນວຸດທິຢ່າງຖືກຕ້ອງເປັນຕົ້ນຄື:
   - ນັກວິຊາການດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (IT) ຢ່າງໜ້ອຍໜຶ່ງຄົນ;
   - ພະນັກງານຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດທີ່ມີຄວາມຮູ້, ຄວາມສາມາດ ນຳໃຊ້ອຸປະກອນເຕັກໂນໂລຊີຂໍ້ມູນຂ່າວສານ (IT) ແລະ ມີຄວາມຮູ້ທາງດ້ານພາສາອັງກິດເປັນ ຢ່າງດີ ຢ່າງໜ້ອຍ 2 ຄົນ;
5. ມີລະບົບພ້ອມດ້ວຍອຸປະກອນສື່ສານເຕັກໂນໂລຊີ ຂໍ້ມູນຂ່າວສານ ທີ່ສາມາດເຊື່ອມຕໍ່ ກັບລະບົບສື່ສານ ດັ່ງກ່າວ ຂອງບັນດາສາຍການບິນ ແລະ ບັນດາບໍລິສັດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
6. ມີອຸປະກອນທີ່ທັນສະໄໝ ແລະ ພຽງພໍ ສຳລັບນຳໃຊ້ໃນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ;
7. ຕົວແທນດັ່ງກ່າວ ຕ້ອງມີສຳນັກງານຖາວອນ ຫລື ສາຂາຢູ່ ສປປ ລາວ.

ມາດຕາ 4: ເອກະສານປະກອບການຂໍອະນຸຍາດ.

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ມີເງື່ອນໄຂຄົບຖ້ວນແລ້ວ ຕ້ອງປະກອບເອກະສານ ຂໍອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ພ້ອມທັງຍື່ນມາຍັງ ກົມການບິນພົນລະເຮືອນ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຕາມຮູບແບບຟອມ ຂອງກົມການບິນພົນລະເຮືອນ;
2. ໃບທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ, ໃນກໍລະນີເປັນສາຂາຂອງບໍລິສັດດັ່ງກ່າວ ຕ້ອງປະກອບ ໃບທະບຽນວິສາຫະກິດໃນນາມເປັນສາຂາ;
3. ໃບປະກາດສະນີຍະບັດ ຫລື ເອກະສານຢັ້ງຢືນຄຸນວຸດທິ ຂອງນັກວິຊາການທີ່ກ່ຽວຂ້ອງ;
4. ບັນຊີລາຍການອຸປະກອນ ສຳລັບການສື່ສານທາງດ້ານເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ສຳລັບການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ;
5. ສຳເນົາສັນຍາເປັນຕົວແທນຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ ກັບສາຍການບິນທີ່ກ່ຽວຂ້ອງ;
6. ເອກະສານຢັ້ງຢືນທີ່ຕັ້ງສຳນັກງານໃຫຍ່ ຫລື ສາຂາ.

ມາດຕາ 5: **ການອອກໃບອະນຸຍາດ.**

ພາຍຫລັງທີ່ໄດ້ຮັບເອກະສານຄຳຮ້ອງຂໍອະນຸຍາດ ຂອງຕົວແທນຂາຍປີ້ເຮືອບິນ ແລະ ຈອງ ບ່ອນໂດຍສານທາງອາກາດແລ້ວ ກົມການບິນພົນລະເຮືອນ ຕ້ອງພິຈາລະນາກ່ຽວກັບການອອກໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໃຫ້ແກ່ວິສາຫະກິດດັ່ງກ່າວ ຢ່າງຊ້າບໍ່ ໃຫ້ເກີນສິບ (10) ວັນລັດຖະການ ນັບແຕ່ວັນທີໄດ້ຮັບ ຄຳຮ້ອງຂໍອະນຸຍາດດັ່ງກ່າວ ເປັນຕົ້ນໄປ.

ຖ້າບໍ່ອອກໃບອະນຸຍາດໃຫ້ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດນັ້ນ, ກົມການບິນພົນລະເຮືອນ ຕ້ອງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ວິສາຫະກິດດັ່ງກ່າວຊາບ ພາຍໃນຫ້າ (5) ວັນລັດຖະການ.

## ໝວດທີ 3
## ການນຳໃຊ້ໃບອະນຸຍາດ ແລະ ຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບໃບອະນຸຍາດ

ມາດຕາ 6: **ການນຳໃຊ້ໃບອະນຸຍາດ.**

ເມື່ອໄດ້ຮັບໃບອະນຸຍາດແລ້ວ ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ສາມາດດຳເນີນກິດຈະການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໄດ້ຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ມາດຕາ 7: **ອາຍຸການນຳໃຊ້ໃບອະນຸຍາດ ແລະ ການຂໍອະນຸຍາດສືບຕໍ່ດຳເນີນກິດຈະການ.**

ໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ມີອາຍຸການນຳໃຊ້ ພາຍໃນກຳນົດ ໜຶ່ງ (1) ປີນັບແຕ່ມື້ ທີ່ໄດ້ອອກໃບອະນຸຍາດເປັນຕົ້ນໄປ. ກ່ອນໝົດອາຍຸການນຳໃຊ້ ສາມສິບ (30) ວັນ, ຖ້າຫາກຕ້ອງການສືບຕໍ່ດຳເນີນກິດຈະການໃນປີຕໍ່ໄປ, ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດນັ້ນ ຕ້ອງປະກອບເອກະສານ ຂໍອະນຸຍາດສືບຕໍ່ການດຳເນີນກິດຈະການ ດັ່ງກ່າວຍື່ນສະເໜີຕໍ່ ກົມການບິນພົນລະເຮືອນ ເພື່ອພິຈາລະນາ.

ມາດຕາ 8: **ເງື່ອນໄຂຂອງຜູ້ທີ່ຈະໄດ້ຮັບອະນຸຍາດສືບຕໍ່ດຳເນີນກິດຈະການ.**

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ຈະໄດ້ຮັບອະນຸຍາດ ສືບຕໍ່ດຳເນີນກິດຈະການຂາຍປີ້ເຮືອບິນ ແລະ ຈອງບ່ອນຕ້ອງມີເງື່ອນໄຂດັ່ງນີ້:

1. ປະສົບຜົນສຳເລັດໃນການດຳເນີນທຸລະກິດ ທີ່ຢັ້ງຢືນດ້ວຍເອກະສານການເງິນ ແລະ ການບັນຊີ ຢ່າງຖືກຕ້ອງ;
2. ບໍ່ມີຄວາມຜິດພາດ ກ່ຽວກັບ ການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ສ້າງ ຄວາມເສຍຫາຍຢ່າງຫລວງຫລາຍໃຫ້ແກ່ສາຍການບິນທີ່ກ່ຽວຂ້ອງ ຫລື ແກ່ຜູ້ໃຊ້ການບໍລິການ;
3. ໄດ້ເສຍອາກອນ ແລະ ປະຕິບັດພັນທະອື່ນໆໃຫ້ແກ່ລັດຢ່າງເປັນປົກກະຕິຕາມກົດໝາຍ;
4. ຍັງມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດທີ່ຢັ້ງຢືນ ດ້ວຍໃບປະກາດສະນີຍະບັດ ຫລື ໃບຢັ້ງຢືນຄຸນວຸດທິ ແລະ ມີຈຳນວນທີ່ເໝາະສົມກັບຂະໜາດຂອງກິດຈະການ ທີ່ກຳນົດໄວ້ຢູ່ຂໍ້ທີ 4 ຂອງມາດຕາ 3;
5. ຍັງມີລະບົບພ້ອມດ້ວຍອຸປະກອນສື່ສານທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອຸປະກອນ ສຳລັບນຳໃຊ້ໃນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໄດ້ກຳນົດ ໄວ້ຢູ່ໃນຂໍ້ທີ 5 ແລະ ຂອງມາດຕາ 3;
6. ຍັງມີສັນຍາເປັນຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຂອງບັນດາສາຍການບິນທີ່ກ່ຽວຂ້ອງ;
7. ຍັງມີສຳນັກງານຖາວອນ ຕັ້ງຢູ່ ສປປ ລາວ.

ຖ້າວ່າຕົວແທນຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ສະເໜີຂໍອະນຸຍາດສືບຕໍ່ດຳ ເນີນກິດຈະການດັ່ງກ່າວມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ກົມການບິນພົນລະເຮືອນ ຈະອອກໃບອະນຸຍາດ ເພື່ອສືບຕໍ່ດຳເນີນກິດຈະການຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ ໃຫ້ຕາມການຮ້ອງຂໍພາຍໃນບໍ່ເກີນຫ້າ (5) ວັນລັດຖະການ.

**ມາດຕາ 9: ພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ໄດ້ຮັບໃບອະນຸຍາດ.**

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໄດ້ຮັບໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທ່າງອາກາດແລ້ວ ມີພັນທະ ແລະ ຄວາມຮັບຜິດຊອບດັ່ງນີ້:

1. ເອົາໃຈໃສ່ໃນການບໍລິການໃຫ້ແກ່ລູກຄ້າຢ່າງມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ.
2. ເສຍຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບ ການອອກໃບອະນຸຍາດຂາຍປີ້ ແລະ ຈອງ ບ່ອນໂດຍສານທາງອາກາດ ຕາມກົດໝາຍທີ່ກ່ຽວຂ້ອງ.
3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຂອງກົມການບິນພົນລະເຮືອນ ໃນການລົງກວດກາ ກ່ຽວກັບ ການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.

4. ລາຍງານຜົນການດຳເນີນງານໃຫ້ ກົມການບິນພົນລະເຮືອນ ຢ່າງເປັນປົກກະຕິ.
5. ແຈ້ງໃຫ້ ກົມການບິນພົນລະເຮືອນຊາບ ໂດຍເປັນລາຍລັກອັກສອນ ໃນກໍລະນີທີ່ຕ້ອງການ ຢຸດຕິການດຳເນີນກິດຈະການຊົ່ວຄາວ ຫລື ຖາວອນ ແລະ ໃນກໍລະນີທີ່ຍົກຍ້າຍສຳນັກງານໃຫ່ຍ ຫລື ສາຂາ.
6. ປະຕິບັດຕາມກົດໝາຍ ວ່າດ້ວຍ ການບິນພົນລະເຮືອນ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

## ໝວດທີ 4

## ການຄຸ້ມຄອງ ແລະການກວດກາ

**ມາດຕາ 10:** ການຄຸ້ມຄອງ ແລະ ກວດກາວຽກງານຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.

ກົມການບິນພົນລະເຮືອນ ແລະ ພະແນກໂຍທາທິການແລະຂົນສົ່ງ ແຂວງ, ນະຄອນຫລວງ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງ ແລະ ກວດກາວຽກງານ ຂາຍປີ້ເຮືອບິນ ແລະ ຈອງບ່ອນ ໂດຍສານທາງອາກາດ ຕາມພາລະບົດບາດຂອງຕົນ.

**ມາດຕາ 11.** **ສິດ ແລະ ໜ້າທີ່ ຂອງກົມການບິນພົນລະເຮືອນ.**

ໃນການຄຸ້ມຄອງ ແລະ ກວດກາວຽກງານ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ກົມການບິນພົນລະເຮືອນ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ພິຈາລະນາການອະນຸຍາດ ຫລື ການຍົກເລີກກິດຈະການຂາຍປີ້ເຮືອບິນ ແລະ ຈອງບ່ອນ ໂດຍສານທາງອາກາດ ໃນຂອບເຂດທົ່ວປະເທດ.
2. ຊີ້ນຳ ແລະ ຊຸກຍູ້ ບັນດາຕົວແທນ ແລະ ສາຂາ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ການບໍລິການ ແກ່ລູກຄ້າຢ່າງມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ ພ້ອມທັງເສຍອາກອນ ແລະ ພັນທະອື່ນໆ ໃຫ້ແກ່ລັດຢ່າງເປັນປົກກະຕິ ແລະ ຄົບຖ້ວນ.
3. ຕິດຕາມກວດກາ ບັນດາຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ລວມທັງສາຂາໃນຂອບເຂດທົ່ວປະເທດ ຢ່າງເປັນລະບົບປົກກະຕິ ຕາມແຜນການ, ນອກແຜນການແບບກະທັນຫັນ ໃນກໍລະນີທີ່ຈຳເປັນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ການບິນພົນລະເຮືອນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫຼວງ.**

ໃນການຄຸ້ມຄອງ ແລະ ກວດກາວຽກງານຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫລວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້ ບັນດາຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍທາງອາກາດ ຫລື ສາຂາ ທີ່ຕັ້ງຢູ່ໃນທ້ອງຖິ່ນຂອງຕົນ ເພື່ອດໍາເນີນການບໍລິການໃຫ້ແກ່ລູກຄ້າ ຢ່າງມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ ພ້ອມທັງຊຸກຍູ້ການເສຍອາກອນ ແລະ ການປະຕິບັດພັນ ທະອື່ນໆໃຫ້ແກ່ລັດ ຢ່າງເປັນປົກກະຕິ ແລະ ຄົບຖ້ວນ;
2. ໃຫ້ຄວາມຮ່ວມມືກັບ ກົມການບິນພົນລະເຮືອນ ກ່ຽວກັບການຄຸ້ມຄອງ ແລະ ກວດກາວຽກງານຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຢູ່ໃນທ້ອງຖິ່ນຂອງຕົນ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 13: ຂໍ້ຫ້າມທົ່ວໄປ.**

ຫ້າມບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ມີການກະທໍາດັ່ງຕໍ່ໄປນີ້:

1. ໃຫ້ສິນບົນແກ່ພະນັກງານ ຫລື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ກ່ຽວກັບ ການອອກໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.
2. ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໂດຍບໍ່ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງ ຈາກກົມການບິນພົນລະເຮືອນ ຫລື ນໍາໃຊ້ໃບອະນຸຍາດຂອງຜູ້ອື່ນ.
3. ມີການກະທໍາອື່ນໆ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 14: ຂໍ້ຫ້າມສໍາລັບຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.**

ຫ້າມຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ມີການກະທໍາດັ່ງຕໍ່ໄປນີ້:

1. ບໍ່ອໍານວຍຄວາມສະດວກ ຫລື ບໍ່ໃຫ້ການຮ່ວມມືແກ່ພະນັກງານ ຫລື ເຈົ້າໜ້າທີ່ ຂອງກົມການບິນພົນລະເຮືອນ ໃນການກວດກາການຂາຍປີ້ ແລະ ຈອງບ່ອນຂອງຕົນ;
2. ບໍ່ເອົາໃຈໃສ່ໃນການບໍລິການເຊັ່ນ: ບໍລິການບໍ່ສະດວກ, ຊັກຊ້າ, ຜິດພາດ ຫລື ບໍ່ຖືກຕ້ອງຕາມລະບຽບການ;

3. ບໍ່ລາຍງານຢ່າງເປັນປົກກະຕິຕໍ່ ກົມການບິນພົນລະເຮືອນ ກ່ຽວກັບ ຜົນຂອງການດຳເນີນກິດຈະການ ຫລື ລາຍງານທີ່ບໍ່ຊັດເຈນ;
4. ບໍ່ຕໍ່ໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຫລື ນຳໃຊ້ໃບອະນຸຍາດທີ່ໝົດກຳນົດ;
5. ເອົາໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໃຫ້ຜູ້ອື່ນນຳໃຊ້ ຫລື ນຳໃຊ້ໃບອະນຸຍາດ ຂອງຜູ້ອື່ນ;
6. ບໍ່ເສຍອາກອນ ຫລື ປະຕິບັດພັນທະອື່ນໆ ໃຫ້ແກ່ລັດຢ່າງຄົບຖ້ວນ ແລະ ເປັນປົກກະຕິຕາມລະບຽບກົດໝາຍ;
7. ມີການກະທຳອື່ນໆທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 15: ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງມີການກະທຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ຫລື ຮັບສິນບົນກ່ຽວກັບການອອກໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄູ່;
2. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ກົດໜ່ວງຖ່ວງດຶງເອກະສານ ກ່ຽວກັບການຂໍອະນຸຍາດດຳເນີນກິດຈະການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ;
3. ລະເລີຍຕໍ່ການຕິດຕາມກວດກາວຽກງານ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຢ່າງເປັນປົກກະຕິ;
4. ມີການກະທຳອື່ນໆ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 16: ນະໂຍບາຍຕໍ່ຜູ້ມີຜົນງານ.**

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ດຳເນີນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດຢ່າງມີປະສິດທິຜົນ, ຖືກຕ້ອງຕາມຂໍ້ຕົກລົງ ສະບັບນີ້, ລະບຽບກົດໝາຍ ກ່ຽວກັບການບິນພົນລະເຮືອນ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບການພິຈາລະນາການອະນຸຍາດ ສືບຕໍ່ດຳເນີນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຕາມການສະເໜີ.

ມາດຕາ 17: ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ; ກ່າວເຕືອນ, ຖືກປັບໃໝ ຫລື ຖືກລົງໂທດທາງອາຍາຕາມລະບຽບກົດໝາຍ.

ມາດຕາ 18: ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ.

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນແມ່ນ ຂໍ້ຫ້າມທີ່ມີລັກສະນະເບົາບາງດັ່ງຕໍ່ໄປນີ້ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ຄື:

- ບໍ່ອຳນວຍຄວາມສະດວກ ຫລື ບໍ່ໃຫ້ການຮ່ວມມືແກ່ພະນັກງານ ແລະ ເຈົ້າໜ້າທີ່ຂອງກົມການບິນພົນລະເຮືອນ ທີ່ລົງກວດກາກ່ຽວກັບກິດຈະການຂອງຕົນ;
- ບໍ່ລາຍງານຢ່າງເປັນປົກກະຕິຕໍ່ກົມການບິນພົນລະເຮືອນ;
- ນຳໃຊ້ໃບອະນຸຍາດຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໝົດກຳນົດ ຊຶ່ງກວດພົບເປັນຄັ້ງທຳອິດ;
- ບໍລິການຊັກຊ້າ ຫລື ບໍ່ສະດວກ ແລະການລະເມີດໃນສະຖານເບົາອື່ນໆ.

ພະນັກງານ ຫລື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ລະເລີຍຕໍ່ການຕິດຕາມກວດກາ ວຽກງານກ່ຽວກັບການຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ ຢ່າງເປັນປົກກະຕິ ກໍຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ຫລື ອາດຖືກປະຕິບັດວິໄນ ຕາມແຕ່ກໍລະນີ.

ມາດຕາ 19: ມາດຕະການປັບໃໝ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ເນື່ອງ ຈາກການກະທຳຕົ້ນຕໍດັ່ງນີ້:

1. ດຳເນີນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໂດຍບໍ່ມີໃບອະນຸຍາດຖືກ ກວດພົບຄັ້ງທີ 1 ຈະຖືກປັບໃໝ ສອງເທົ່າ, ຄັ້ງທີສອງ ຈະຖືກປັບໃໝສາມເທົ່າ ແລະ ຄັ້ງທີສາມ ຈະຖືກປັບໃໝຫ້າເທົ່າຂອງ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການອອກໃບອະນຸຍາດດ້ານນີ້ ທີ່ກຳນົດ ໄວ້ໃນລັດຖະບັນຍັດ ຂອງປະທານປະເທດແຫ່ງ ສປປ ລາວ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໃນແຕ່ລະໄລຍະ;
2. ນຳໃຊ້ໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໝົດກຳນົດ ຊຶ່ງໄດ້ ຖືກສຶກສາອົບຮົມ ແລະ ກ່າວເຕືອນແລ້ວຄັ້ງໜຶ່ງ, ຫາກກວດພົບອີກຄັ້ງທີ່ 2 ຈະຖືກປັບໃໝ ສອງເທົ່າ ຂອງຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບ ການອອກໃບອະນຸຍາດດ້ານນີ້ ທີ່ໄດ້ກຳນົດໄວ້ໃນຂໍ້ທີ່ 1 ຂອງ ມາດຕາ 19 ນີ້ ພ້ອມທັງຖືກປັບໃໝອີກ ສິບພັນກີບຕໍ່ວັນ ຕາມຈຳນວນວັນທີ່ເກີນ ກຳນົດການນຳໃຊ້ໃບອະນຸຍາດັ່ງກ່າວໃນໄລຍະຜ່ານມາ;

3. ເອົາໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໃຫ້ຜູ້ອື່ນນຳໃຊ້ ຫລື ນຳໃຊ້ໃບອະນຸຍາດຂອງຜູ້ອື່ນຈະຖືກປັບໃໝ ສອງເທົ່າ ຂອງຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການດຳເນີນທຸລະກິດດ້ານນີ້ ທີ່ໄດ້ກຳນົດຢູ່ຂໍ້ທີ 1 ຂອງມາດຕາ 19 ນີ້ ພ້ອມທັງຖືກປັບໃໝອີກ ສິບພັນກີບຕໍ່ອັນ ຕາມຈຳນວນທີ່ໄດ້ນຳໃຊ້ໃບອະນຸຍາດດັ່ງກ່າວໃນໄລຍະຜ່ານມາ.

**ມາດຕາ 20: ມາດຕະການທາງແພ່ງ.**

ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຊັບສິນ ຂອງບຸກຄົນ ຫລື ການຈັດຕັ້ງ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນເຊັ່ນ: ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໂດຍບໍ່ຖືກຕ້ອງຕາມ ລະບຽບການທີ່ກ່ຽວຂ້ອງ ຊຶ່ງເຮັດໃຫ້ລູກຄ້າບໍ່ສາມາດເດີນທາງໄປສູ່ຈຸດຈຸດໝາຍຕາມກຳນົດເວລາ ແລະ ດ້ວຍສາຍການບິນທີ່ໄດ້ຈອງບ່ອນໄດ້ແລ້ວ ພ້ອມທັງເຮັດໃຫ້ລູກຄ້າຕ້ອງໄດ້ມີການໃຊ້ຈ່າຍຕ່າງໆເພີ່ມຂຶ້ນ ເປັນຕົ້ນແມ່ນຄ່າອາຫານ, ທີ່ພັກ ແລະ ຄ່າໃຊ້ຈ່າຍອື່ນໆທີ່ຈຳເປັນ.

**ມາດຕາ 21: ມາດຕະການທາງອາຍາ.**

ບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍອາຍາ ເຊັ່ນ:

- ການໃຫ້ສິນບົນແກ່ພະນັກງານ ຫລື ເຈົ້າໜ້າທີ່ກ່ຽວຂ້ອງ ກ່ຽວກັບການອອກໃບອະນຸຍາດຂາຍປີ້ ແລະ ຈອງບ່ອນເຮືອບິນ;
- ການປອມແປງໃບອະນຸຍາດ ການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ;
- ການກະທຳອື່ນໆ ທີ່ເປັນການກະທຳຜິດທາງອາຍາ;

ພະນັກງານ ຫລື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ທີ່ໄດ້ສວຍໃຊ້ໜ້າທີ່ຕຳແໜ່ງ ຫລື ຮັບສິນບົນກ່ຽວກັບການອອກ ລວມທັງການຍົກເລີກໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ກໍຈະຖືກດຳເນີນຄະດີຕາມກົດໝາຍອາຍາ.

**ມາດຕາ 22: ມາດຕະການໂທດເພີ້ມ.**

ນອກຈາກມາດຕະການ ທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 17, 18, 19, 20 ແລະ 21 ຂອງຂໍ້ຕົກລົງສະບັບນີ້ ຜູ້ລະເມີດອາດຈະຖືກປະຕິບັດມາດຕະການໂທດເພີ້ມອີກຄື ບໍ່ໄດ້ຮັບການພິຈາລະນາການອະນຸຍາດ, ຖືກຖອນໃບອະນຸຍາດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 23:** ການຈັດຕັ້ງປະຕິບັດ.

ມອບໃຫ້ ກົມການບິນພົນລະເຮືອນ ເຜີຍແຜ່ຂໍ້ຕົກລົງສະບັບນີ້ ແລະ ອອກບົດແນະນຳເພີ້ມເຕີມ ໂດຍສອດຄ່ອງຕາມກົດໝາຍ ແລະ ກົດລະບຽບ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 24:** ຜົນບັງຄັບໃຊ້.

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ສົມບາດ ພົລເສນາ